# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 26 ພະຈິກ 2006 ( 11-26-2006 )

---

## <u>ມີຊີວິດຢູ່ດຽວນີ້...ແລະຕລອດໄປເປັນນິດ:</u>

## ເອຊາຢາ 55:1-13

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ເອຊາຢາ 55:1-13

**<u>ຄວາມຈິງໃນພຣະຄັມພີ:</u>** ບໍ່ຄວນມີຜູ້ໃດຈະເສັຍຊ້າໃນການທີ່ຈະຕອບສນອງຕໍ່ການຍອມສາລະພາບແລະເຊື່ອໝັ້ນໃນຊີວິດໃໝ່ທີ່ພຣະເຈົ້າໄດ້ສເນີໃຫ້.

ອາຍຂາຍໜ້າຕົນເອງ ແລະຈະຫລົງຫາຍຈາກຊີວິດທີ່ພຣະເຈົ້າຊົງປະທານໃຫ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນເພື່ອຊ່ອຍໃຫ້ທ່ານມີປະສົບການຢ່າງເຕັມປ່ຽມໃນການດຳເນີນຊີວິດທີ່ມີຄວາມສັມພັນທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

- ຈະໄດ້ສຳຫລວດເບິ່ງເຖິງເຫດຜົນວ່າເປັນຫຍັງຈຶ່ງຕ້ອງຮັບເອົາຊີວິດຈາກພຣະເຈົ້າ..
- .ຕັດສິນໃຈທີ່ຈະຫວນກັບຄືນໄປຫາພຣະເຈົ້າ ເພື່ອທີ່ຈະໄດ້ຮັບຊີວິດທີ່ສຳເຣັດເຕັມບໍຣິບູນ..

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### <u>ບົດນຳ:</u>

1). ເພື່ອຄວາມກະຈ່າງແຈ້ງຕໍ່ການຮຽນບົດຮຽນນີ້ຂໍໃຫ້ຄຣູສອນອະທິບາຍ ແລະຍົກຂໍ້ທີ່ສຳຄັນທີ່ມີຄວາມກ່ຽວພັນກັບຊີວິດປະຈຸບັນ ແລະຊີວິດນິຣັນ: ໂດຍໃຫ້ນັກຮຽນຜູ້ນຶ່ງອາສາສມັກເຫລົ່າສູ່ໝູ່ຟັງ.

2). ສິ່ງທີ່ສຳຄັນໃນຊີວິດຂອງທຸກຄົນນັ້ນກໍຄື ມີຄວາມສຳພັນຢູ່ກັບພຣະເຈົ້າຜູ້ຊົງພຣະຊົນຢູ່ຕລອດເປັນນິດ

**ຄຳຖາມ:** 1).ດຽວນີ້ແມ່ນຄວາມສັມພັນກັບອັນໃດທີ່ສຳຄັນທີ່ສຸດໃນຊີວິດຂອງທ່ານ? 2). ເປັນຫຍັງຄວາມສັມພັນກັບພຣະເຈົ້າຈຶ່ງເປັນການຈຳເປັນແລະສຳຄັນສຳລັບພວກເຮົາ

## 1. **ພຣະເຈົ້າຊົງປະທານ: ໄດ້ຊີວິດທີ່ເຕັມບໍຣິບູນ!** ( ເອຊາຢາ 55:1-5 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ເອຊາຢາ 55:1-5 *

2) ຂໍໃຫ້ນັກຮຽນສລູບຂໍ້ພຣະຄັມພີນີ້ ເມື່ອນັກຮຽນໄດ້ສລູບຂໍ້ພຣະຄັມພີແລ້ວ ໃຫ້ເນັ້ນຄວາມຈິງສອງປະການດັ່ງຕໍ່ໄປນີ້:

(1) ພຣະປະສົງຂອງພຣະເຈົ້າແມ່ນຢາກມີຄວາມສັມພັນກັບພວກເຮົາ (2) ສິ່ງທີ່ເຮົາຕ້ອງການສຳລັບຄວາມສັມພັນແລະຄວາມບົກພ່ອງຂອງເຮົາໃນການພັທນາຄວາມສັມພັນ.

3) **ອະທິບາຍ:** ມະນຸດເຮົາໄດ້ຄົ້ນຄວ້າສແວງຫາສິ່ງທີ່ມີຄວາມໝາຍໃນຊີວິດແຕ່ບໍ່ເຄີຍພົບກັບຄວາມເພິ່ງພໍໃຈ ເປັນຕົ້ນວ່າ; ຄວາມຮັ່ງມີ, ຄວາມສວຍງາມ, ວັນຖຸສິ່ງຂອງ, ຄວາມສຳເຣັດດ້ານກິລາ, ຄວາມສຳເຣັດໃນອາຊີບ, ແລະອື່ນໆ. ໃຫ້ນັກອອກຄວາມຄິດເຫັນວ່າເຂົາເຈົ້າໄດ້ຄົ້ນພົບອັນໃດທີ່ໃຫ້ຄວາມເພິ່ງພໍໃຈແກ່ຕົນ.

4) **ເລົ່າເຣື່ອງ:** ມີເພື່ອນ 2 ຄົນ ຄົນນຶ່ງເປັນຄຣິສຕຽນແລະອີກຄົນນຶ່ງບໍ່ເປັນຄຣິສຕຽນ ໄດ້ໂອ້ລົມກັນເຣື່ອງຄວາມລອດພົ້ນບາບ. ເພື່ອນທີ່ບໍ່ເປັນຄຣິສຕຽນເວົ້າວ່າລາວຫຍຸ້ງຫລາຍໃນການຕິດຕາມວັດຖຸອັນຫລອກລວງຂອງໂລກນີ້ ບໍ່ມີເວລາທີ່ຈະຄິດເຖິງຄວາມສັມພັນກັບພຣະເຈົ້າ. ເພື່ອນຄຣິສຕຽນໄດ້ເວົ້າເນັ້ນວ່າ ມີພຽງພຣະເຈົ້າເທົ່ານັ້ນທີ່ສາມາດປະທານຊີວິດອັນຄົບບໍຣິບູນແລະຊີວິດອັນຕລອດໄປເປັນນິດ.

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**</u> ເອຊາຢາ 55:1-5

1) ການເຂົ້າມາຫາພຣະເຈົ້າ ກັບການເຂົ້າຮ່ວມໃນງານກິນລ້ຽງອັນຫລູຫລາ ຄືກັນຢ່າງໃດ?

2) ກ່ອນທີ່ເຮົາຈະມາຫາພຣະເຈົ້າ ມີສອງຢ່າງທີ່ເຮົາຄວນຮູ້ນັ້ນ ແມ່ນຫຍັງ ?

3) ທາງໃດແດ່ທີ່ທ່ານໄດ້ຕິດຕາມສແວງຫາ ແຕ່ບໍ່ໄດ້ຮັບຄວາມເພິ່ງພໍໃຈ? ທ່ານຈະໃຊ້ປະສົບການດັ່ງກ່າວນີ້ເພື່ອເວົ້າຂ່າວປະເສີດໃຫ້ຜູ້ທີ່ຍັງບໍ່ເປັນຄຣິສຕຽນແນວໃດ?

## 2. **ພຣະເຈົ້າຊົງເຊີນ: ໃຫ້ຫັນກັບມາດຽວນີ້ ແລະຈະຊົງໃຫ້ອະພັຍ!:** ( ເອຊາຢາ 55:6-7 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ເອຊາຢາ55:6-7

2) **ໂມງ:** ເອົາເຈັ້ຽມາຕັດ ຫລືແຕ້ມຮູບໂມງໃສ່ກະດານ ແລະຂຽນຄຳວ່າ: ສແວງຫາອົງພຣະຜູ້ເປັນເຈົ້າ ເຮົາອາດຈະພົບພຣະອົງ -ອຊຢ 55:6. ໃສ່ກ້ອງໂມງ. ໃຫ້ນັກຮຽນຄົ້ນຄວ້ານຳກັນເຣື່ອງເວລາທີ່ໄດ້ພາດໂອກາດເພາະວ່າຊ້າເກີນໄປ. ໃຊ້ນ້ຳກເກົຂຽນວ່າ "ໄດ້ພາດໂອກາດ" ອ້ອມຂ້າງຮູບໂມງ. **ຖາມ:** ນັກຮຽນເຊື່ອບໍ່ວ່າຄົນໃດຄົນນຶ່ງອາດຈະພາດໂອກາດເພາະວ່າລາວໄດ້ຕັດສິນໃຈຊ້າເກີນໄປທີ່ຈະຮັບເອົາຄວາມລອດພົ້ນ.

3) ໃຫ້ນັກຮຽນແຕ່ລະຄົນຄົ້ນຫາຂໍ້ພຣະຄັມພີໃນພຣະຄັມພີໃໝ່ 1 ຂໍ້ທີ່ສນັບສນູນພຣະທັມ ອຊຢ 55:6 ຖ້າພົບແລ້ວໃຫ້ອ່ານ

4) ທ້າຊວນນັກຮຽນໃຫ້ບອກເຖິງຄວາມຮັບຜິດຊອບຂອງມະນຸດ ແລະການຕອບສນອງຂອງພຣະເຈົ້າທີ່ໄດ້ກ່າວໄວ້ໃນພຣະຄັມພີຂໍ້ນີ້.

5) ຖາມນັກຮຽນວ່າເຂົາເຈົ້າເຫັນດີນຳຫລືບໍ່ໃນປໂຍກຕໍ່ໄປນີ້: *"ຄົນຂໍທານທີ່ມີເປົ້າເທົ່ານັ້ນທີ່ມີສິດຈະໄດ້ຮັບຊີວິດອັນຕລອດໄປເປັນນິດ ເປັນຂອງພຣະຣາຊທານ"* **ນຳພາ:** ແລກປ່ຽນຄວາມຄິດເຫັນເຣື່ອງ ຊີວິດອັນຕລອດໄປເປັນນິດ ແມ່ນຂອງພຣະຣາຊທານຈາກພຣະເຈົ້າ. ອີງຕາມພຣະທັມ ໂຣມ 6:23

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ**</u> ເອຊາຢາ 55:6-7

1. ຖ້າທ່ານສາມາດໃຊ້ຄຳເວົ້າພຽງຄຳດຽວອະທິບາຍໃນຂໍ້ 6 ທ່ານໃຊ້ຄຳເວົ້ານັ້ນວ່າຢ່າງໃດ?
2. ທ່ານຈະແນະນຳຄົນອື່ນບໍ່ໃຫ້ຊ້າໃນການຕັດສິນໃຈຮັບເອົາຄວາມລອດພົ້ນຢ່າງໃດ?
3. ເປັນຫຍັງຄວາມລອດພົ້ນຈຶ່ງມີຄວາມໝາຍວ່າ ການຫັນຫລັງໃຫ້ຄວາມບາບ ແລະຫັນໜ້າກັບມາຫາພຣະເຈົ້າ.
4. ພຣະເຈົ້າຮັບປະກັນຢ່າງໃດ ວ່າຈະຕອບສນອງຕໍ່ຜູ້ທີ່ຫັນກັບມາຫາພຣະອົງເພື່ອຮັບເອົາຄວາມລອດພົ້ນ?

**<u>3. ພຣະເຈົ້າຊົງຮັບປະກັນ: ຄຳສັນຍາຂອງພຣະອົງບໍ່ລົ້ມເຫລວ:</u>** ( ເອຊາຢາ 55:8-13 )

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ເອຊາຢາ 55:8-13

2) ຂີດເສັ້ນເຄິ່ງກາງກະດານ ແບ່ງເປັນສອງຝ່າຍ ຂ້າງໜຶ່ງໃຫ້ຂຽນວ່າ "**ຄວາມຄິດແລະທາງຂອງພຣະເຈົ້າ**" ແລະອີກຂ້າງນຶ່ງຂຽນວ່າ "**ຄວາມຄິດແລະທາງຂອງເຮົາ**" ໃຫ້ນັກຮຽນປຽບທຽບສອງຂ້າງໃສ່ກັນ, ໃຫ້ນັກຮຽນຄົນນຶ່ງຍົກຕົວຢ່າງທາງຂອງພຣະເຈົ້າແລະທາງຂອງມະນຸດ. ແລກປ່ຽນຄວາມຄິດເຫັນກັນເຖິງຄວາມສຳຄັນໃນການປຽບທຽບ.

3) ນຳພານັກຮຽນໃຫ້ເວົ້າເຖິງ ຄຳສັນຍາຂອງພຣະເຈົ້າ ໃນຂໍ້ທີ 11 ເປັນຄວາມເວົ້າຂອງເຂົາເຈົ້າເອງ. **ຄຳຖາມ:** ຄຳສັນຍານີ້ໄດ້ສຳເຣັດໃນຊີວິດຂອງທ່ານແລ້ວບໍ່, ດົນປານໃດແລ້ວ?

4. ນຳພານັກຮຽນ ໃຫ້ບອກຄຸນສົມບັດ 2 ຢ່າງຂອງຜູ້ທີ່ຫັນກັບມາຫາພຣະເຈົ້າໃນຂໍ້ 12-13. ບອກໃຫ້ນັກຮຽນພິຈາຣະເບິ່ງຄຳຖາມດັ່ງຕໍ່ໄປນີ້: *"ຫາກຜູ້ໃດຜູ້ນຶ່ງກຳລັງຈະເຂົ້າໃຈໃນພຣະເຈົ້າ ທີ່ໄດ້ເຫັນຄວາມປິຕິຍິນດີແລະສັນຕິສຸກໃນຊີວິດຂອງທ່ານ, ເຂົາເຈົ້າຈະຄິດກ່ຽວກັບພຣະເຈົ້າແນວໃດ?"*

5. ໃຫ້ເນັ້ນເພີ້ມເຕີມວ່າ ຄວາມປິຕິຍິນດີແລະສັນຕິສຸກ ມາຈາກການທີ່ໄດ້ຮູ້ຈັກກັບພຣະເຈົ້າ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u> ເອຊາຢາ 55:8-13

1. ເປັນຫຍັງຈຶ່ງຖືວ່າເປັນການສຳຄັນໃນການປຽບທຽບຣະຫວ່າງມະນຸດກັບພຣະເຈົ້າ?
2. ພຣະຄຳຂອງພຣະເຈົ້າມີເປົ້າໝາຍ(ຈຸດປະສົງ) ແນວໃດ?
3. ຈົ່ງບອກໝາກຜົນຂອງພຣະຄຳພຣະເຈົ້າມາສອງຢ່າງໃນຊີວິດຂອງຜູ້ທີ່ເຊື່ອ ມີຫລັກຖານອັນໃດທີ່ບອກວ່າໝາກຜົນເຫລົ່ານີ້ມີຢູ່ໃນຊີວິດຂອງທ່ານ?

4). ທ່ານຈະອະທິບາຍຄຳສັນຍາຂອງພຣະເຈົ້າເຣື່ອງຊີວິດທີ່ຄົບບໍຣິບູນແລະຊີວິດອັນຕລອດໄປໃຫ້ຄົນທີ່ຢາກຈະຕັດສິນໃຈຮັບເອົາຄວາມລອດພົ້ນ ຢ່າງໃດ?

<u>ສລູບ:</u>

1. ພຣະເຈົ້າຊົງປະທານຊີວິດອັນຄົບບໍຣິບູນໃຫ້ແກ່ຄົນບາບໂດຍບໍ່ຄິດຣາຄາ ພຣະວ່າອົງພຣະເຢຊູຊົງເປັນຜູ້ໄຖ່ແລ້ວດ້ວຍຊີວິດຂອງພຣະອົງ.
2. ພຣະເຈົ້າຊົງເຊີນພວກເຮົາໃຫ້ອວ່າຍໜີຈາກຄວາມບາບ ແລະຮັບເອົາການອະພັຍຈາກພຣະອົງດ້ວຍຄວາມເຊື່ອ ໂດຍທີ່ບໍ່ຕ້ອງກະທຳສິ່ງໃດເພື່ອເປັນສິ່ງແລກປ່ຽນ.
3. ພຣະຄຳຂອງພຣະເຈົ້ານັ້ນແນ່ນອນແລະເປັນຄວາມຈິງ. ຜູ້ໃດທີ່ກັບໃຈໃໝ່ແລະອວ່າຍມາຫາພຣະເຢຊູຄຣິດດ້ວຍຄວາມເຊື່ອຈະໄດ້ຮັບຄວາມລອດພົ້ນຈາກພຣະອົງ.
4. ໜູນໃຈໃຫ້ນັກຮຽນເວົ້າຄຳພະຍານຊີວິດຄຣິສຕຽນຂອງຕົນເອງໃຫ້ຄົນອື່ນຟັງພາຍໃນອາທິດນີ້
5. ອະທິຖານປິດການຮຽນ

.